**ມິຊຊາອາທິດທີ 2 ກຳນົດປາສກາ**

**ວັນທີ 11 ເມສາ 2021**



**ພຣະວໍລະສານໂດຍນັກບຸນຢວງ 20, 19-31**

ໃນວັນຕົ້ນອາທິດ, ເວລາຕົກຄ່ຳແລະປະຕູບ່ອນພວກລູກສິດໂຮມກັນຢູ່ນັ້ນກໍອັດໄວ້ຢ່າງແໜ້ນ ຍ້ອນຢ້ານພວກຢິວ. ພຣະເຢຊູເຈົ້າສະເດັດມາປະທັບຢືນຢູ່ກາງພວກເຂົາກ່າວວ່າ: "ສັນຕິສຸກຈົ່ງມີແກ່ພວກເຈົ້າ". ກ່າວແລ້ວ, ພຣະອົງກໍຊົງສຳແດງພຣະຫັດແລະພຣະສີຂ້າງໃຫ້ພວກລູກສິດເບິ່ງ. ພວກລູກສິດພາກັນຊື່ນຊົມຍິນດີໄດ້ເຫັນພຣະອົງເຈົ້າ. ພຣະອົງກ່າວເປັນຄັ້ງທີສອງວ່າ: "ສັນຕິສຸກຈົ່ງມີແກ່ພວກເຈົ້າ, ພຣະບິດາໄດ້ຊົງໃຊ້ເຮົາມາແນວໃດ, ເຮົາກໍໃຊ້ພວກເຈົ້າໄປແນວນັ້ນດ້ວຍ". ແລ້ວພຣະອົງຊົງເປົ່າລົມໃສ່ພວກເຂົາພ້ອມກັບກ່າວວ່າ: "ຈົ່ງຮັບພຣະຈິດເຈົ້າ, ພວກເຈົ້າໂຜດບາບໃຫ້ຜູ້ໃດບາບຜູ້ນັ້ນກໍຈະຫລຸດ, ແລະພວກເຈົ້າໜ່ວງຈ່ອງບາບຜູ້ໃດໄວ້ບາບຂອງຜູ້ນັ້ນກໍຈະຍັງຄ້າງຄາຢູ່".

ສ່ວນໂທມາທີ່ມີຊື່ວ່າດີດິມ, ຜູ້ໜຶ່ງໃນພວກສາວົກສິບສອງຄົນ, ບໍ່ໄດ້ຢູ່ນຳໝູ່ເວລາພຣະເຢຊູເຈົ້າປະຈັກມານັ້ນ. ພາຍຫລັງພວກສາວົກອື່ນໆຈຶ່ງເລົ່າໃຫ້ໂທມາຟັງວ່າ: "ພວກເຮົາໄດ້ເຫັນພຣະອົງເຈົ້າແລ້ວ." ໂທມາຕອບວ່າ: "ຖ້າເຮົາບໍ່ໄດ້ເຫັນຮອຍຕະປູຢູ່ທີ່ພຣະຫັດ, ບໍ່ໄດ້ເອົານິ້ວມືແຫຍ່ເຂົ້າຮອຍຕະປູນັ້ນ ແລະບໍ່ໄດ້ເອົາມືແຫຍ່ເຂົ້າຮອຍບາດບ່ອນພຣະສີຂ້າງແລ້ວ, ເຮົາກໍຈະບໍ່ເຊື່ອ."

ແປດມື້ຕໍ່ມາ, ພວກສາວົກກໍໂຮມກັນອີກ ແລະໂທມາກໍຢູ່ນຳດ້ວຍ. ພຣະເຢຊູເຈົ້າສະເດັດມາໂດຍປະຕູຍັງອັດຢູ່. ພຣະອົງປະທັບຢືນກາງພວກເຂົາແລະກ່າວວ່າ: "ສັນຕິສຸກຈົ່ງມີແກ່ພວກເຈົ້າ." ແລ້ວພຣະອົງກ່າວກັບໂທມາວ່າ: "ຈົ່ງເອົານິ້ວມືຂອງເຈົ້າແຫຍ່ເຂົ້າບ່ອນນີ້ແລະຈົ່ງເບິ່ງມືຂອງເຮົາ. ຢ່າດື້ດຶງອີກ, ແຕ່ຈົ່ງເຊື່ອເຖີດ." ໂທມາຂາບທູນວ່າ: "ໂອພຣະອົງເຈົ້າແລະພຣະເປັນເຈົ້າຂອງຂ້າພະເຈົ້າ!" ພຣະເຢຊູເຈົ້າກ່າວວ່າ: "ໂທມາເອີຍ! ເຈົ້າເຊື່ອຍ້ອນເຈົ້າໄດ້ເຫັນເຮົາ; ບຸນລາບແກ່ຜູ້ທີ່ເຊື່ອແມ່ນວ່າບໍ່ໄດ້ເຫັນ."

ພຣະເຢຊູເຈົ້າຊົງທຳອັດສະຈັນອື່ນໆອີກຫລາຍຕໍ່ໜ້າພວກລູກສິດ, ແຕ່ບໍ່ໄດ້ບັນທຶກໄວ້ໃນໜັງສືເຫລັ້ມນີ້. ສິ່ງເຫລົ່ານີ້ໄດ້ຂຽນບັນທຶກໄວ້ ກໍເພື່ອໃຫ້ພວກທ່ານເຊື່ອວ່າພຣະເຢຊູແມ່ນພຣະກຣິສໂຕ, ພຣະບຸດຂອງພຣະເປັນເຈົ້າ. ແລະເມື່ອເຊື່ອດັ່ງນີ້ແລ້ວ, ພວກທ່ານຈະໄດ້ຊີວິດເດຊະພຣະນາມຂອງພຣະອົງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ບົດອ່ານທັງສາມບົດພ້ອມກັບເພງສັກສິດໃນວັນອາທິດທີສອງກຳນົດປາສການີ້ລ້ວນແຕ່ກ່າວເຖິງຄວາມຮັກຂອງພຣະເຢຊູເຈົ້າຜູ້ໄດ້ຕາຍແລະໄດ້ກັບເປັນຄືນມາເພື່ອພວກເຮົາ.

ໃນບົດອ່ານທີໜຶ່ງຈາກໜັງສືຂອງພວກອັກຄະທຳມະທູດ, ພວກສາວົກໄດ້ເປັນພິຍານເຖິງພຣະເຢຊູເຈົ້າຜູ້ກັບເປັນຄືນມາຈາກຄວາມຕາຍ ດ້ວຍການເປັນໜຶ່ງດຽວກັນໃນຄວາມຮັກ. ຄວາມຮັກນີ້ສະແດງອອກຜ່ານທາງຄວາມຊ່ວຍເຫລືອຄົນອື່ນ. ເປັນຕົ້ນແມ່ນຄົນທີ່ຢູ່ໃນຄວາມຂັດສົນ, ຄົນທີ່ບໍ່ສາມາດຊ່ວຍເຫລືອຕົວເອງໄດ້.

ສ່ວນໃນບົດອ່ານທີສອງຈາກຈົດໝາຍຂອງນັກບຸນຢວງກໍກ່າວວ່າ ຜູ້ໃດຢູ່ໃນຄວາມຮັກ, ຜູ້ນັ້ນກໍເກີດມາຈາກພຣະເຈົ້າແລະເປັນລູກຂອງພຣະເຈົ້າ. ຄົນອື່ນຈະຮູ້ເຖິງຄວາມຮັກຂອງເຮົາທີ່ມີຕໍ່ພຣະເຈົ້ານັ້ນກໍຕໍ່ເມື່ອພວກເຮົາເຊື່ອຟັງວາຈາຂອງພຣະອົງແລະນຳມາປະຕິບັດໃນຊີວິດ.

ໃນພຣະວໍລະສານ, ພຣະເຢຊູເຈົ້າກໍໄດ້ປະຈັກມາຫາພວກສາວົກທີ່ກຳລັງຢູ່ໃນຄວາມກົວຢ້ານ, ໂດຍກ່າວກັບພວກເຂົາວ່າ: "ສັນຕິສຸກຈົ່ງມີແກ່ພວກເຈົ້າ". ສັນຕິສຸກທີ່ພຣະເຢຊູເຈົ້າກ່າວນີ້ແມ່ນສັນຕິສຸກແຫ່ງຄວາມຮັກ. ແລະຄວາມຮັກນີ້ໄດ້ສະແດງອອກຜ່ານທາງການທໍລະມານ, ຕາຍແລະຖືກຄຶງໃສ່ກາງເຂນເພື່ອບາບໂທດຂອງມະນຸດ. ດ້ວຍເຫດນີ້, ຫລັງຈາກທີ່ມອບສັນຕິສຸກໃຫ້ພວກສາວົກແລ້ວ, ພຣະເຢຊູເຈົ້າກໍໃຫ້ພວກເຂົາເຫັນຮອຍແຜແລະພຣະສີຂ້າງທີ່ຖືກແທງຂອງພຣະອົງ. ສິ່ງນີ້ບໍ່ພຽງແຕ່ໃຫ້ພວກລູກສິດເຊື່ອວ່າພຣະອົງຜູ້ກັບເປັນຄືນມານີ້ແມ່ນຜູ້ດຽວກັບຜູ້ທີ່ໄດ້ຖືກທໍລະມານແລະຕາຍ. ແຕ່ຮອຍແຜທີ່ພຣະອົງໃຫ້ພວກລູກສິດເຫັນນີ້ແມ່ນເຄື່ອງໝາຍແຫ່ງຄວາມຮັກທີ່ພຣະອົງມີຕໍ່ພວກເຂົາແລະຕໍ່ມວນມະນຸດ. ເພາະບໍ່ມີຄວາມຮັກໃດ ຍິ່ງໃຫຍ່ເທົ່າການສະລະຊີວິດຂອງຕົນເພື່ອຄົນທີ່ເຮົາຮັກ.

ແລະສິ່ງທີ່ພຣະເຢຊູເຈົ້າປາດຖະໜາໃຫ້ພວກລູກສິດກໍຄືພວກເຮົາທີ່ເຊື່ອເຖິງພຣະອົງນີ້ ກໍຄືໃຫ້ພວກເຮົາເປັນພິຍານແລະປະກາດເຖິງຄວາມຮັກທີ່ພຣະອົງມີຕໍ່ພວກເຮົາແລະຕໍ່ມະນຸດທັງມວນ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ສຳພັດໄດ້ເຖິງຄວາມຮັກຂອງພຣະອົງທີ່ມີຕໍ່ລູກຜູ້ເປັນຄົນບາບ. ຜູ້ໄດ້ທຳໃຫ້ພຣະອົງຕ້ອງຖືກທໍລະມານແລະຕາຍດັ່ງຄົນໂທດ. ຂໍໃຫ້ລູກໄດ້ເປີດໃຈຮັບເອົາຄວາມຮັກຂອງພຣະອົງເຂົ້າມາໃນຊີວິດຂອງລູກ. ເພື່ອລູກຈະໄດ້ກາຍເປັນເຄື່ອງມືແຫ່ງຄວາມຮັກຂອງພຣະອົງໃຫ້ກັບຄົນອື່ນດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ